ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----=====00000=====-----

ແຂວງຫົວພັນ

ເລກທີ.....04...../ ຈຂ

ຊຳເໜືອ, ວັນທີ 12 / 07 /2013

# ຄຳສັ່ງ

ເຖິງ: ບັນດາທ່ານເຈົ້າເມືອງ, ກອງບັນຊາການທະຫານ, ຕຳຫຼວດ, ພະແນກກວດກາ ແລະ ຄວບຄຸມຢາເສບຕິດ, ຫ້ອງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ຫ້ອງການ ປກຊ - ປກສ ແລະ ພະແນກການກ່ຽວຂ້ອງ ຂອງແຂວງ.

ເລື່ອງ: ໃຫ້ເອົາໃຈໃສ່ສະກັດກັ້ນການລະເມີດປູກຝິ່ນ ແລະ ການແກ້ໄຂປະກົດການຫຍໍ້ທໍ້ຂອງຢາເສບຕິດພາຍໃນແຂວງ.

- ອີງຕາມ ກົດໝາຍການປົກຄອງທອງຖິ່ນສະບັບເລກທີ 03/ສພຊ ລົງວັນທີ 21 ຕຸລາ 2003.
- ອີງຕາມ ກົດໝາຍວ່າດ້ວຍຢາເສບຕິດ ແລະ ກົດໝາຍອາຍາ ມາດຕາ 146 ສະບັບປັບປຸງໃໝ່ກ່ຽວກັບການຜະລິດ, ຄ້າຂາຍ - ຂົນສົ່ງ, ເສບ ຫຼື ມີຢາເສບຕິດໄວ້ໃນຄອບຄອງ.

ໃນປີຜ່ານມາສັງເກດເຫັນວ່າການລັກລອບປູກຝິ່ນຢູ່ພາຍໃນແຂວງພວກເຮົາ ມີລັກສະນະເພີ່ມຂຶ້ນເຊິ່ງໄດ້ສ້າງຄວາມບໍ່ສະຫງົບ ແລະ ຄວາມບໍ່ເປັນລະບຽບຮຽບຮ້ອຍຕໍ່ແຂວງຫົວພັນ ພວກເຮົາ ຄະນະພັກ, ອຳນາດການປົກຄອງທຸກຂັ້ນ ກໍ່ໄດ້ເປັນເຈົ້າການສຶກສາອົບຮົມປະຊາຊົນໃຫ້ຮັບຮູ້ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ເຮັດໃຫ້ປະຊາຊົນສ່ວນຫຼາຍ ບໍ່ລະເມີດປູກຝິ່ນ ກົງກັນຂ້າມຢູ່ບາງກຸ່ມບ້ານ, ອຳນາດການປົກຄອງບ້ານບໍ່ໄດ້ເອົາໃຈໃສ່ຄຸ້ມຄອງປະຊາຊົນຂອງຕົນປະປ່ອຍໃຫ້ເຂົາເຈົ້າມີການລະເມີດປູກຝິ່ນ ບາງກຸ່ມບ້ານກໍ່ໄດ້ຮັບການແກ້ໄຂ ແລະ ປັບໃໝເອົາເງິນແຕ່ບໍ່ມີການຈັດຕັ້ງທຳລາຍຍັງປ່ອຍໃຫ້ຜູ້ລະເມີດປູກຝິ່ນ ໄດ້ເກັບກູ້ເອົາຢາງຝິ່ນ ການຈັດຕັ້ງແກ້ໄຂດັ່ງກ່າວບໍ່ທັນໄດ້ປະຕິບັດຕາມກົດໝາຍ ທີ່ໄດ້ກຳນົດໄວ້ ຈຶ່ງເຮັດໃຫ້ປະຊາຊົນ ບໍ່ມີຄວາມຢ້ານກົວ ແລະ ເຂັດລາບ ຜູ້ລະເມີດປູກຝິ່ນຈຳນວນໜຶ່ງຍັງມີການທ້າທາຍຕໍ່ການຈັດຕັ້ງ ຕໍ່ສະພາບການດັ່ງກ່າວ ເປັນບັນຫາຫຍຸ້ງຍາກສັບສົນຢູ່ໃນສັງຄົມເປັນການກີດໜ່ວງຖ່ວງດຶງ ການພັດທະນາ ເສດຖະກິດ - ສັງຄົມ ຂອງແຂວງພວກເຮົາ ໃນລະດູ ແລ້ງປີ 2013 ທີ່ຈະມາເຖິງນີ້ ເພື່ອເປັນການສະກັດກັ້ນແຕ່ຫົວທີບໍ່ໃຫ້ປະຊາຊົນມີການລະເມີດປູກຝິ່ນ ຫຼື ປູກແລ້ວແຕ່ຍັງໜ້ອຍ ໃຫ້ສາມາດແກ້ໄຂໄດ້ແຕ່ຫົວທີ ເຮັດໃຫ້ແຂວງຫົວພັນ ເປັນແຂວງລຶບລ້າງການປູກຝິ່ນ

ໄດ້ຢ່າງສິ້ນເຊີງ ແລະ ເພື່ອເຮັດໃຫ້ການຄວບຄຸມກວດກາ, ແກ້ໄຂການລະເມີດປູກຝິ່ນ ມີຄວາມຫັດກຸມ, ເຂັ້ມງວດ, ທັງຮັບປະກັນບໍ່ໃຫ້ມີໄຮ່ຝິ່ນຕົກຄ້າງຄືປີຜ່ານມາ.

ເຈົ້າແຂວງ ຈິ່ງອອກຄຳສັ່ງດັ່ງນີ້:

1/. ໃຫ້ກອງບັນຊາການທະຫານ, ຕຳຫຼວດ, ບັນດາພະແນກການຂອງແຂວງ ເຈົ້າເມືອງ ແລະ ພາກສ່ວນກ່ຽວຂ້ອງສືບຕໍ່ເຮັດວຽກງານໂຄສະນາສຶກສາອົບຮົມແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ໃຫ້ຄະນະພັກກຸ່ມບ້ານ, ອຳນາດການປົກຄອງບ້ານ, ປກສ ກຸ່ມບ້ານ, ທີມງານກໍ່ສ້າງຮາກຖານການເມືອງ ສົມທົບກັບອຳນາດການປົກຄອງບ້ານ ອະທິບາຍຊີ້ເຫດຊີ້ຜົນ ໃຫ້ປະຊາຊົນທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນບໍ່ວ່າບຸກຄົນ ແລະ ຄອບຄົວ ບໍ່ໃຫ້ມີການກະກຽມເງື່ອນໄຂລັກລອບປູກຝິ່ນຢ່າງເດັດຂາດທັງເອົາໃຈໃສ່ກວດກາຄວບຄຸມແຕ່ຫົວທີ.

2/. ໃຫ້ເຈົ້າເມືອງຊີ້ນຳອົງການຈັດຕັ້ງມະຫາຊົນ ນຳເອົາພະນັກງານທີ່ກ່ຽວຂ້ອງລົງສົມທົບຄະນະພັກກຸ່ມບ້ານ ແລະ ອຳນາດການປົກຄອງບ້ານ ເຮັດວຽກງານສຶກສາອົບຮົມການເມືອງແນວຄິດ ໃຫ້ປະຊາຊົນໂດຍສະເພາະ ເຈົ້າກົກ, ເຈົ້າເລົ່າ, ຊົງຊາວ ເພື່ອໃຫ້ເຂົາເຈົ້າເປັນເຈົ້າການປຸກລະດົມຊາວບ້ານ, ລູກຫຼານ ເປັນແບບຢ່າງບໍ່ປູກຝິ່ນ, ບໍ່ຄອບຄອງ ຫຼື ຮັກສາແກ່ນຝິ່ນ ແລະ ບໍ່ຂາຍເບ້ຍຝິ່ນ, ບໍ່ເສບ, ບໍ່ຊົມໃຊ້, ບໍ່ຄ້າຂາຍແລະ ບໍ່ຂົນສົ່ງຢາເສບຕິດທຸກປະເພດ. ພ້ອມທັງຕິດຕາມປະຊາຊົນບໍ່ໃຫ້ກະກຽມເນື້ອທີ່ເພື່ອປູກຝິ່ນ.

3/. ໃຫ້ກອງບັນຊາການທະຫານ, ກອງບັນຊາການຕຳຫຼວດແຂວງ ຊີ້ນຳກອງບັນຊາການທະຫານ, ຕຳຫຼວດເມືອງ ຕາມສາຍຂອງຕົນ ວິຊາສະເພາະ ປະທານ ປກຊ - ປກສ ເມືອງ ເອົາໃຈໃສ່ຊີ້ນຳທຸກກຳລັງປ້ອງກັນຄວາມສະຫງົບທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນໃຫ້ປະສານທຸກພາກສ່ວນ ແລະ ເປັນເຈົ້າການສົມທົບກັບຄະນະພັກກຸ່ມບ້ານ, ອຳນາດການປົກຄອງບ້ານ ລົງເຄື່ອນໄຫວກວດກາຕິດຕາມພື້ນທີ່ຕາມຂອບເຂດຄວາມຮັບຜິດຊອບ ເຝົ້າລະວັງກວດກາຄຸ້ມຄອງສຳມະໂນຄົວ, ກຳໃຫ້ໄດ້ການເໜັງຕີງຂອງພົນລະເມືອງ ການຍົກຍ້າຍໄປ - ມາ ຕັ້ງພູມລຳເນົາ, ຕັ້ງສະນຳລ້ຽງສັດ - ເຮັດໄຮ່ ໃນຂອບເຂດທ້ອງຖິ່ນ ແລະ ເຂດດິນແດນຂອງບ້ານຕົນ ພ້ອມກັນນັ້ນກໍ່ເອົາໃຈໃສ່ກວດກາອາວຸດເສິກ ແລະ ອາວຸດລ່າເນື້ອທີ່ມີການເພີ່ມຂຶ້ນ ຖ້າກວດພົບເຫັນໄຮ່ຝິ່ນ ຕ້ອງກວດກາໃຫ້ລະອຽດແມ່ນປະຊາຊົນ ບຸກຄົນ ຢູ່ບ້ານໃດເປັນຜູ້ປູກ ໃຫ້ຮີບຮ້ອນສະກັດກັ້ນແຕ່ຫົວທີໂດຍສຶກສາອົບຮົມ, ກ່າວເຕືອນ, ສ້າງບົດບັນທຶກໃຫ້ຢຸດຕິການປູກຝິ່ນ ເກັບກຳຂໍ້ມູນຜູ້ດື້ດ້ານ ຫຼື ຫົວໂປ້ໂຕການນຳພາຜູ້ອື່ນລະເມີດປູກຝິ່ນ ເພື່ອປະຕິບັດມາດຕາການແກ້ໄຂຢ່າງເໝາະສົມ.

4/. ໃຫ້ເມືອງ ແລະ ກຸ່ມບ້ານເອົາໃຈໃສ່ກວດກາ ຄອບຄົວ ຫຼື ບຸກຄົນທີ່ໄດ້ຮັບການສຶກສາອົບຮົມ, ກ່າວເຕືອນ ແລະ ສ້າງບັນທຶກສັນຍາໃຫ້ຢຸດເຊົາປູກຝິ່ນແລ້ວ ແຕ່ຄອບຄົວ ແລະ ບຸກຄົນທີ່ກ່ຽວຂ້ອງຍັງສືບຕໍ່ບົວລະບັດສວນ ຫຼື ໄຮ່ຝິ່ນປະໃຫ້ຕົ້ນຝິ່ນໃຫຍ່ຂຶ້ນ ໃຫ້ທຸກພາກສ່ວນ ແລະ ທຸກກຳລັງປະສານສົມທົບກັນ

ແກ້ໄຂໃຫ້ຂາດຕົວ, ເດັດຂາດບໍ່ໃຫ້ເຂົ້າເຈົ້າໄດ້ເກັບກູ້ ຫຼື ປາດເອົາຝິ່ນ ໂດຍໃຫ້ປະຕິບັດໂທດຕາມລະບຽບກົດໝາຍ ແລະ ປັບໃໝແກ້ໄຂຢູ່ຂັ້ນກຸ່ມ ຫຼື ເມືອງ ພາຍຫຼັງສຶກສາອົບຮົມ, ປັບໃໝແລ້ວ ໃຫ້ຄອບຄົວ ຫຼື ການຈັດຕັ້ງທຳລາຍໄຮ່ຝິ່ນໃຫ້ສຳເລັດ.

- ຖ້າກົມກອງ, ບ້ານ, ຄອບຄົວ ແລະ ບຸກຄົນໃດ ຫາກຄົ້ດານຜ່າຝືນບໍ່ປະຕິບັດຕາມຄຳສັ່ງຂອງຂັ້ນເທິງວາງອອກຈະຖືກປະຕິບັດໂທດ ຕາມກົດໝາຍອາຍາ ມາດຕາ 146 ຂໍ້ 4 ບັກ 6,7,8,9. ສະບັບປັບປຸງໃໝ່ຢ່າງເຂັ້ມງວດ ແລະ ເດັດຂາດ ກົງກັນຂ້າມຖ້າກົມກອງ, ບ້ານ, ຄອບຄົວ ແລະ ບຸກຄົນໃດປະຕິບັດໄດ້ດີຈະໄດ້ຮັບການຍ້ອງຍໍຢ່າງສົມກຽດ.

5/. ໃຫ້ແຕ່ລະເມືອງເອົາໃຈໃສ່ຊີ້ນຳກຸ່ມບ້ານ ໃນການສ້າງບ້ານປອດຢາເສບຕິດ ເພື່ອໃຫ້ກຸ່ມບ້ານເປັນເຈົ້າການປະກອບສ່ວນສ້າງຂະບວນການຕ້ານຢາເສບຕິດຢູ່ບັນດາບ້ານ, ໝວດໂຮງຮຽນໃຫ້ແຂງແຮງ ສ້າງບ້ານ ແລະ ໂຮງຮຽນປອດຢາເສບຕິດໃຫ້ໄດ້ຕາມຄາດໝາຍ 15/ບ້ານ/ເມືອງ/ປີ ແລະ 5 ໝວດໂຮງຮຽນ/ເມືອງ/ປີ ທັງເອົາໃຈໃສ່ກວດກາປະເມີນຜົນ ແລະ ຍັ້ງຢືນຄືນຈຳນວນບ້ານທີ່ໄດ້ປະກາດໄປແລ້ວ. ພ້ອມທັງເກັບກຳຂໍ້ມູນ ຜູ້ທີ່ຕິດຢາເສບຕິດແຕ່ລະປະເພດໃຫ້ລະອຽດຊັດເຈນ ປຸກລະດົມຜູ້ຕິດຢາເສບຕິດ ເຂົ້າຮັບການບຳບັດແບບຊຸມຊົນ ຫຼື ຢູ່ສູນບຳບັດຂອງແຂວງ ຕາມເງື່ອນໄຂເໝາະສົມຂອງຄອບຄົວ.

ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ເມື່ອໄດ້ຮັບຄຳສັ່ງນີ້ແລ້ວ ໃຫ້ບັນດາເມືອງ ພະແນກການກ່ຽວຂ້ອງ ຈົ່ງພ້ອມກັນຄົ້ນຄ້ວາຈັດຕັ້ງປະຕິບັດ ໃຫ້ຖືກຕ້ອງເຂັ້ມງວດ ແລະ ໄດ້ຮັບຜົນດີ.

**ເຈົ້າແຂວງ ແຂວງຫົວພັນ**

ຄຳຮຸ່ງ ເຮືອງວົງສີ